**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ..2234..../ປທສ

ນະຄອນຫຼວງວຽງຈັນ, ວັນທີ..10...ກໍລະກົດ..2017

# ຂໍ້ຕົກລົງ

## ວ່າດ້ວຍການໃຫ້ບໍລິການຕິດຕັ້ງ ແລະ ສ້ອມແປງດ້ານໄອຊີທີ

- ອີງຕາມ ກົດໝາຍວ່າດ້ວຍ ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ, ສະບັບເລກທີ 02/ສພຊ, ລົງວັນທີ 07 ພະຈິກ 2016.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວຂອງ ກະຊວງໄປສະນີ, ໂທລະຄົມມະນາຄົມແລະການສື່ສານ, ສະບັບເລກທີ 22/ນຍ, ລົງວັນທີ 16 ມັງກອນ 2017.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງການບໍລິການຕິດຕັ້ງ ແລະ ສ້ອມແປງດ້ານໄອຊີທີ ເພື່ອສົ່ງເສີມການດຳເນີນກິດຈະການໃຫ້ມີຄວາມເປັນລະບຽບ, ຖືກຕ້ອງ ແລະ ມີຄຸນນະພາບແນໃສ່ປົກປ້ອງສິດຜົນປະໂຫຍດຂອງຜູ້ໃຊ້ບໍລິການ ປະກອບສ່ວນເຂົ້າໃນການສ້າງສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2. ການໃຫ້ບໍລິການຕິດຕັ້ງ ແລະສ້ອມແປງດ້ານໄອຊີທີ**

ການບໍລິການຕິດຕັ້ງດ້ານໄອຊີທີ ແມ່ນການນຳເອົາອຸປະກອນໄອຊີທີ ຫຼື ຊອບແວຕິດຕັ້ງໃນສະຖານທີ່ໃດໜຶ່ງ ຫຼື ໃນເຄື່ອງຄອມພິວເຕີໃດໜຶ່ງ ເພື່ອໃຫ້ສາມາດນຳໃຊ້ຕາມຈຸດປະສົງສະເພາະ ເປັນຕົ້ນ ການຕິດຕັ້ງເສົາສັນຍານ, ລະບົບເຊີເວີ, ລະບົບເຄືອຂ່າຍອິນເຕີເນັດ, ລະບົບປະຕິບັດການຄອມພິວເຕີ ຫຼື ເຄືອຂ່າຍກ້ອງວົງຈອນປິດ.

ການບໍລິການສ້ອມແປງດ້ານໄອຊີທີ ແມ່ນການບຳລຸງຮັກສາ, ປັວແປງ ອຸປະກອນໄອຊີທີ ຫຼື ຊອບແວ ເປັນຕົ້ນ ການສ້ອມແປງ ເຄື່ອງຄອມພິວເຕີ, ລະບົບເຄືອຂ່າຍ ຫຼື ລະບົບເຊີເວີຕ່າງໆ ໃຫ້ມີສະພາບພ້ອມໃຊ້ງານຕະຫລອດເວລາ.

**ມາດຕາ 3. ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ໃຫ້ບໍລິການຕິດຕັ້ງ ແລະ ສ້ອມແປງດ້ານໄອຊີທີ** ໝາຍເຖິງບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດ ຈາກ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານໃນການໃຫ້ບໍລິການຕິດຕັ້ງ, ສ້ອມແປງ ແລະ ບຳລຸງຮັກສາບັນດາອຸປະກອນໄອຊີທີ ຫຼື ຊອບແວ ເປັນຕົ້ນ ລະບົບເຊີເວີ, ລະບົບຮັກສາຄວາມປອດໄພ, ລະບົບເຄືອຂ່າຍ;

2. **ໃບອະນຸຍາດດຳເນີນທຸລະກິດບໍລິການຕິດຕັ້ງ ແລະ ສ້ອມແປງດ້ານໄອຊີທີ** ໝາຍເຖິງໃບຢັ້ງຢືນສິດໃນການໃຫ້ບໍລິການຕິດຕັ້ງ, ສ້ອມແປງ ແລະ ບຳລຸງຮັກສາ ອຸປະກອນໄອຊີທີ ຫຼື ຊອບແວ ເປັນຕົ້ນ ລະບົບເຊີເວີ, ລະບົບຮັກສາຄວາມປອດໄພ, ລະບົບເຄືອຂ່າຍ ໃນ ສປປ ລາວ;

3. **ອຸປະກອນໄອຊີທີ** ໝາຍເຖິງບັນດາອຸປະກອນທີ່ກ່ຽວຂ້ອງກັບເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ເຊັ່ນ: ຄອມພິວເຕີ, ແລບທ໋ອບ, ແທັບແລັດ, ສະມາດໂຟນ, ອຸປະກອນປະມວນຜົນ, ອຸປະກອນເກັບຂໍ້ມູນ, ອຸປະກອນເຄືອຂ່າຍ, ອຸປະກອນເຊື່ອມຕໍ່ອິນເຕີເນັດ ແລະ ອື່ນໆ.

**ມາດຕາ 4. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ ຫຼື ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດທີ່ດຳເນີນທຸລະກິດບໍລິການຕິດຕັ້ງ ແລະ ສ້ອມແປງດ້ານໄອຊີທີ ຢູ່ໃນສປປລາວ.

## ໝວດທີ 2
## ປະເພດ ແລະ ການອະນຸຍາດ

**ມາດຕາ 5. ປະເພດການບໍລິການຕິດຕັ້ງ ແລະ ສ້ອມແປງດ້ານໄອຊີທີ**

ປະເພດບໍລິການຕິດຕັ້ງ ແລະ ສ້ອມແປງດ້ານໄອຊີທີ ປະກອບມີ 4 ປະເພດ ດັ່ງນີ້:

1. **ການຕິດຕັ້ງ ແລະ ສ້ອມແປງ ອຸປະກອນໄອຊີທີຂະໜາດນ້ອຍ** ແມ່ນການບໍລິການຕິດຕັ້ງ, ສ້ອມແປງ ແລະ ບຳລຸງຮັກສາຄອມພິວເຕີ ທີ່ຖືກນຳໃຊ້ທົ່ວໄປ ເຊັ່ນ: ຄອມພິວເຕີຕັ້ງໂຕະ, ຄອມພິວເຕີແບບພົກພາ, ແທັບແລັດ, ສະມາດໂຟນ, ອຸປະກອນປະມວນຜົນ, ອຸປະກອນເກັບຂໍ້ມູນ, ອຸປະກອນເຄືອຂ່າຍ, ອຸປະກອນເຊື່ອມຕໍ່ອິນເຕີເນັດ ລວມທັງຊອບແວທີ່ກ່ຽວຂ້ອງ;

2. **ການຕິດຕັ້ງ ແລະ ສ້ອມແປງລະບົບເຊີເວີ (Server System)** ແມ່ນການບໍລິການຕິດຕັ້ງ, ສ້ອມແປງ ແລະ ບຳລຸງຮັກສາກ່ຽວກັບເຊີເວີ ແລະ ພື້ນຖານໂຄງລ່າງທີ່ກ່ຽວຂ້ອງເພື່ອໃຫ້ບໍລິການ ເຊັ່ນ: ເວັບເຊີເວີ, ເມວລ໌ເຊີເວີ, ໄຟລ໌ເຊີເວີ ແລະ ອື່ນໆ;

3. **ການຕິດຕັ້ງ ແລະ ສ້ອມແປງລະບົບຮັກສາຄວາມປອດໄພ (SecuritySystem)** ແມ່ນການບໍລິການຕິດຕັ້ງ, ສ້ອມແປງ ແລະ ບຳລຸງຮັກສາກ່ຽວກັບລະບົບການປ້ອງກັນໄພທາງດ້ານລະບົບຄອມພິວເຕີ ແລະ ລະບົບໄອຊີ

ທີ ທີ່ກ່ຽວຂ້ອງກັບການຮັກສາຄວາມປອດໄພ ເຊັ່ນ: ໄຟຣວໍ, ລະບົບປ້ອງກັນໄວຣັດ, ລະບົບປ້ອງກັນຖານຂໍ້ມູນ ແລະ ອື່ນໆ;

4. **ການຕິດຕັ້ງ ແລະ ສ້ອມແປງລະບົບເຄືອຂ່າຍ (Network System)** ແມ່ນການບໍລິການຕິດຕັ້ງ, ສ້ອມແປງ ແລະ ບໍາລຸງຮັກສາກ່ຽວກັບໂຄງລ່າງພື້ນຖານເຄືອຂ່າຍໂທລະຄົມມະນາຄົມ ຫຼື ເຄືອຂ່າຍຄອມພິວເຕີ ເຊັ່ນ: ເຄືອຂ່າຍພາຍໃນ (LAN), ເຄືອຂ່າຍພາຍນອກ ທີ່ນໍາໃຊ້ສາຍໃຍແກ້ວ (Fiber), ສາຍທອງແດງ, ສາຍເຄເບີ້ນ (Coaxial), ຄື້ນຄວາມຖີ່ວິທະຍຸສື່ສານ ແລະ ອື່ນໆ.

**ມາດຕາ 6. ມາດຕະຖານເຕັກນິກ**

ຜູ້ໃຫ້ບໍລິການຕິດຕັ້ງ ແລະ ສ້ອມແປງ ດ້ານໄອຊີທີຕ້ອງມີ ເຄື່ອງມື, ອຸປະກອນ ແລະ ຊິ້ນສ່ວນຮັບໃຊ້ໃນການຕິດຕັ້ງ ແລະ ສ້ອມແປງທີ່ໄດ້ມາດຕະຖານ ຫຼື ໄດ້ຮັບການຢັ້ງຢືນຕາມລະບຽບການກ່ຽວກັບການນໍາເຂົ້າອຸປະກອນໄອຊີທີ ແລະ ປະຕິບັດຕາມມາດຕະຖານເຕັກນິກອື່ນ ຕາມການກໍານົດຂອງ ຂະແໜງການ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

**ມາດຕາ 7. ມາດຕະຖານບຸກຄະລາກອນ**

ຜູ້ໃຫ້ບໍລິການຕິດຕັ້ງ ແລະ ສ້ອມແປງ ດ້ານໄອຊີທີຕ້ອງມີບຸກຄະລາກອນທີ່ມີຄວາມຮູ້ດ້ານວິຊາສະເພາະ ທີ່ກ່ຽວຂ້ອງກັບຂະແໜງການເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ໂດຍມີໃບຢັ້ງຢືນຈາກສະຖາບັນການສຶກສາ ຫຼື ບໍລິສັດທີ່ຖືກຮັບຮອງ ໂດຍ ກະຊວງ ສຶກສາທິການ ແລະ ກິລາ ຫຼື ຂະແໜງການໄປສະນີ,ໂທລະຄົມມະນາຄົມ ແລະ ການສື່ສານ.

**ມາດຕາ 8. ການຮັບປະກັນ**

ການຮັບປະກັນ ແມ່ນການຢັ້ງຢືນດ້ານຄຸນນະພາບຂອງການບໍລິການໃຫ້ແກ່ຜູ້ໃຊ້ບໍລິການ ເພື່ອໃຫ້ສິດແກ່ຜູ້ໃຊ້ບໍລິການສາມາດຮຽກຮ້ອງໃຫ້ສ້ອມແປງ, ປ່ຽນແທນ ຫຼື ຍົກເລີກການບໍລິການດັ່ງກ່າວ ຕາມໄລຍະເວລາຮັບປະກັນ.

ຜູ້ໃຫ້ບໍລິການຕ້ອງຮັບປະກັນການບໍລິການຕິດຕັ້ງ ແລະ ສ້ອມແປງຕາມຄວາມເໝາະສົມຂອງປະເພດການບໍລິການນັ້ນ ໂດຍໃຫ້ມີສັນຍາການຮັບປະກັນເປັນລາຍລັກອັກສອນ ຢ່າງຊັດເຈນ.

**ມາດຕາ 9. ການຂໍອະນຸຍາດ**

ບຸກຄົນ ຫຼື ນິຕິບຸກຄົນທີ່ມີຈຸດປະສົງດໍາເນີນທຸລະກິດການໃຫ້ບໍລິການຕິດຕັ້ງ ແລະ ສ້ອມແປງດ້ານໄອຊີທີ ພາຍຫຼັງທີ່ໄດ້ຮັບໃບທະບຽນວິສາຫະກິດແລ້ວ ຕ້ອງຂໍໃບອະນຸຍາດດໍາເນີນທຸລະກິດນໍາ ຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໂດຍປະຕິບັດຕາມເງື່ອນໄຂທີ່ໄດ້ກໍານົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 10. ເງື່ອນໄຂໃນການພິຈາລະນາອອກໃບອະນຸຍາດ**

ເງື່ອນໄຂໃນການພິຈາລະນາ ປະກອບມີ ດັ່ງນີ້:

1. ຕ້ອງມີໃບຄໍາຮ້ອງ, ບົດວິພາກເສດຖະກິດ, ບົດວິພາກເຕັກນິກ ແລະ ປະກອບເອກະສານຄົບຖ້ວນ ຕາມທີ່ລະບຸໄວ້ໃນເອກະສານຊ້ອນທ້າຍ ແລະ ຕາມອີງການຄຸ້ມຄອງກໍານົດ;

2. ຕ້ອງມີວິຊາການທີ່ກ່ຽວຂ້ອງກັບປະເພດຂອງການບໍລິການ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້;

3. ຕ້ອງບໍ່ຢູ່ໃນຊ່ວງໄລຍະທີ່ຖືກອາຍັດຊັບສິນ, ຢູ່ໃນຂະບວນການລົ້ມລະລາຍ ຫຼື ຖືກສານຕັດສິນເປັນຜູ້ລົ້ມລະລາຍຕາມກົດໝາຍຂອງ ສປປ ລາວ;

4. ຕ້ອງມີທີ່ຕັ້ງສໍານັກງານ ຫຼື ຮ້ານ ທີ່ແນ່ນອນ.

**ມາດຕາ 11. ການພິຈາລະນາອອກໃບອະນຸຍາດ**

ການຄົ້ນຄວ້າພິຈາລະນາອອກໃບອະນຸຍາດໃຫ້ແກ່ຜູ້ຮ້ອງຂໍບໍລິການຕິດຕັ້ງ ແລະ ສ້ອມແປງດ້ານໄອຊີທີຕ້ອງສໍາເລັດພາຍໃນກໍານົດເວລາ 10 ວັນ ລັດຖະການ ນັບແຕ່ວັນທີໄດ້ຮັບຄໍາຮ້ອງທີ່ຄົບຖ້ວນ ແລະ ຖືກຕ້ອງເປັນຕົ້ນໄປ.

ໃນກໍລະນີ ເອກະສານບໍ່ຖືກຕ້ອງ, ບໍ່ຄົບຖ້ວນ ຫຼື ບໍ່ມີເງື່ອນໄຂ ໄດ້ຮັບອະນຸຍາດຕ້ອງແຈ້ງໃຫ້ຜູ້ຂໍອະນຸຍາດຮັບຊາບ ພາຍໃນກໍານົດເວລາ 5 ວັນລັດຖະການ.

**ມາດຕາ 12. ການຂໍຕໍ່, ປ່ຽນແປງ, ໂຈະ ຫຼື ຍົກເລີກໃບອະນຸຍາດ**

ການຕໍ່ໃບອະນຸຍາດດໍາເນີນທຸລະກິດການໃຫ້ບໍລິການຕິດຕັ້ງ ແລະ ສ້ອມແປງດ້ານໄອຊີທີ ຕ້ອງຍື່ນໃບຄໍາຮ້ອງຂໍຕໍ່ ກ່ອນວັນໝົດອາຍຸຢ່າງໜ້ອຍ 30 ວັນ.

ຜູ້ໃຫ້ການບໍລິການຕິດຕັ້ງ ແລະ ສ້ອມແປງດ້ານໄອຊີທີ ທີ່ມີຈຸດປະສົງຂໍປ່ຽນແປງເນື້ອໃນໃບອະນຸຍາດ, ໂຈະ ຫຼື ຍົກເລີກການໃຫ້ບໍລິການຂອງຕົນ ຕ້ອງປະກອບເອກະສານສະເໜີ ເພື່ອຊີ້ແຈງເຫດຜົນ ແລະ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

**ມາດຕາ 13. ຂອບເຂດການບໍລິການ**

ໃບອະນຸຍາດດໍາເນີນທຸລະກິດການໃຫ້ບໍລິການຕິດຕັ້ງ ແລະ ສ້ອມແປງດ້ານໄອຊີທີ ສາມາດນໍາໃຊ້ໄດ້ຕາມປະເພດການຕິດຕັ້ງສ້ອມແປງ ແລະ ຂອບເຂດການບໍລິການ ທີ່ໄດ້ກໍານົດໄວ້ໃນໃບອະນຸຍາດເທົ່ານັ້ນ ແລະ ມີອາຍຸການນໍາໃຊ້ ໜຶ່ງປີ ນັບແຕ່ວັນທີອອກໃບອະນຸຍາດເປັນຕົ້ນໄປ.

**ມາດຕາ 14. ຄ່າທໍານຽມ ແລະ ຄ່າບໍລິການ**

ຄ່າທໍານຽມ ແລະ ຄ່າບໍລິການ ໃນການຂໍອະນຸຍາດດໍາເນີນທຸລະກິດບໍລິການຕິດຕັ້ງ ແລະ ສ້ອມແປງດ້ານໄອຊີທີແມ່ນໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນລະບຽບການສະເພາະ ກ່ຽວກັບຄ່າທໍານຽມ ແລະ ຄ່າບໍລິການທີ່ປະກາດໃຊ້ໃນແຕ່ໄລຍະ.

## ໝວດທີ 3
## ສິດ ແລະ ພັນທະ

**ມາດຕາ 15. ສິດ ແລະ ພັນທະ ຂອງຜູ້ໃຫ້ບໍລິການ**

ຜູ້ໃຫ້ບໍລິການຕິດຕັ້ງ ແລະ ສ້ອມແປງດ້ານໄອຊີທີມີສິດ ແລະ ພັນທະ ດັ່ງນີ້:

1. ສະເໜີຂໍຕໍ່ ,ປ່ຽນແປງ, ໂຈະ ຫຼື ຍຸບເລີກການດຳເນີນກິດຈະການຂອງຕົນ;
2. ປະຕິບັດຕາມລະບຽບການຂອງ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກ່ຽວກັບການຄຸ້ມຄອງການໃຫ້ບໍລິການຕິດຕັ້ງ, ສ້ອມແປງ ແລະ ບໍາລຸງຮັກສາອຸປະກອນໄອທີ;
3. ເຄົາລົບສິດ ແລະ ຮັກສາຂໍ້ມູນສ່ວນຕົວຂອງຜູ້ໃຊ້ບໍລິການ, ບໍ່ເປີດເຜີຍຂໍ້ມູນສ່ວນຕົວຂອງຜູ້ໃຊ້ບໍລິການຍົກເວັ້ນມີການສະເໜີຂອງອົງການຈັດຕັ້ງລັດທີ່ມີສິດອຳນາດກ່ຽວຂ້ອງ;
4. ຮັບປະກັນການໃຫ້ບໍລິການຢ່າງມີຄຸນນະພາບ;
5. ຢູ່ພາຍໃຕ້ການຄຸ້ມຄອງ ແລະ ກວດກາຂອງຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
6. ມອບພັນທະໃຫ້ລັດຕາມກົດໝາຍ ແລະ ລະບຽບການ;
7. ປະຕິບັດສິດ ແລະ ພັນທະອື່ນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 16. ສິດ ແລະ ພັນທະຂອງຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການຕິດຕັ້ງ ແລະ ສ້ອມແປງດ້ານໄອຊີທີ ມີສິດ ແລະ ພັນທະ ດັ່ງນີ້:

1. ໄດ້ຮັບການບໍລິການທີ່ມີຄຸນນະພາບ, ສະດວກ, ວ່ອງໄວ ແລະປອດໄພ;
2. ທວງຖາມ ແລະ ຮ້ອງຟ້ອງຜູ້ໃຫ້ບໍລິການຕາມຂັ້ນຕອນຂະບວນການຍຸຕິທຳ ເພື່ອໃຫ້ຄວາມເປັນທຳຕໍ່ຜູ້ຊົມໃຊ້;
3. ສະເໜີຕໍ່ອົງການຄຸ້ມຄອງ ແລະ ກວດກາກ່ຽວກັບຄຸນນະພາບ, ມາດຕະຖານການໃຫ້ບໍລິການ ແລະ ຄ່າບໍລິການຕ່າງໆ ຂອງຜູ້ໃຫ້ບໍລິການ;
4. ຮັບຜິດຊອບຕໍ່ອຸປະກອນໄອຊີທີຂອງຕົນ ຊຶ່ງອາດເປັນຜົນກະທົບຕໍ່ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ແລະ ສັງຄົມທີ່ເປັນການລະເມີດຕໍ່ກົດໝາຍ ແລະ ລະບຽບການ;
5. ຈ່າຍຄ່າບໍລິການຕາມລະບຽບການ;
6. ປະຕິບັດສິດ ແລະ ພັນທະອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 17. ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ກີດກັ້ນ, ຂັດຂວາງການດຳເນີນທຸລະກິດ ໃຫ້ບໍລິການຕິດຕັ້ງ ແລະ ສ້ອມແປງດ້ານໄອຊີທີ;

2. ຮ່ວມມື, ສ້າງເງື່ອນໄຂ ຫຼື ອຳນວຍຄວາມສະດວກໃຫ້ແກ່ບຸກຄົນ, ນິຕິບຸກຄົນໃດໜຶ່ງ ໃນການລະເມີດຂໍ້ຫ້າມ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

3. ມີພຶດຕິກຳອື່ນ ທີ່ລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 18. ຫ້າມສຳລັບພະນັກງານຄຸ້ມຄອງ**

ຫ້າມພະນັກງານຄຸ້ມຄອງ ການດຳເນີນທຸລະກິດໃຫ້ບໍລິການຕິດຕັ້ງ ແລະ ສ້ອມແປງດ້ານໄອຊີທີ ມີພຶດຕິກຳ ດັ່ງນີ້:

1. ກົດໜ່ວງ, ຖ່ວງດຶງ ແລະ ປອມແປງເອກະສານ;

2. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວນຳຜູ້ໃຫ້ບໍລິການ;

3. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງຜູ້ໃຫ້ ແລະ ຜູ້ໃຊ້ບໍລິການ;

4. ມີພຶດຕິກຳອື່ນທີ່ ລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 19. ຂໍ້ຫ້າມສຳລັບຜູ້ໃຫ້ບໍລິການ**

ຫ້າມຜູ້ໃຫ້ບໍລິການຕິດຕັ້ງ ແລະ ສ້ອມແປງ ດ້ານໄອຊີທີມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດໂດຍບໍ່ໄດ້ຮັບອະນຸຍາດຈາກ ຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

2. ນຳໃບອະນຸຍາດໃຫ້ຄົນອື່ນໃຊ້, ເຊົ່າ ຫຼື ໂອນ;

3. ໃຫ້ບໍລິການນອກເໜືອຈາກປະເພດການໃຫ້ບໍລິການຕາມທີ່ກຳນົດໃນໃບອະນຸຍາດ ຫຼື ຂອບເຂດທີ່ກຳນົດໄວ້;

4. ອຸດໜູນ, ຄອບງຳ ຫຼື ໃຊ້ອຳນາດການຕະຫຼາດທີ່ບໍ່ເປັນທຳຕໍ່ຜູ້ປະກອບການລາຍອື່ນ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

# ໝວດທີ 5
# ການຄຸ້ມຄອງ

**ມາດຕາ 20. ອົງການຄຸ້ມຄອງ ການບໍລິການຕິດຕັ້ງ ແລະ ສ້ອມແປງດ້ານໄອຊີທີ**

ອົງການຄຸ້ມຄອງ ການບໍລິການຕິດຕັ້ງ ແລະ ສ້ອມແປງດ້ານໄອຊີທີ ແມ່ນຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 21. ສິດ ແລະ ໜ້າທີ່ ຂອງ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ**

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາອອກ, ຕໍ່, ປ່ຽນແປງ, ໂຈະ ແລະ ຖອນໃບອະນຸຍາດ;
2. ຕິດຕາມ ແລະ ກວດກາການປະຕິບັດເງື່ອນໄຂ, ມາດຕະຖານ ແລະ ລະບຽບການຕາມຂໍ້ຕົກລົງສະບັບນີ້;
3. ກ່າວເຕືອນ, ສຶກສາອົບຮົມ ຫຼື ປັບໃໝຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;
4. ຮັບ ແລະ ພິຈາລະນາແກ້ໄຂຄໍາສະເໜີກ່ຽວກັບການໃຫ້ບໍລິການ ເປັນຕົ້ນ ຄຸນນະພາບຂອງການບໍລິການ ແລະ ຄ່າບໍລິການຕ່າງໆ;
5. ເກັບຄ່າທໍານຽມ ແລະ ຄ່າບໍລິການ ໃບອະນຸຍາດດໍາເນີນທຸລະກິດໃຫ້ບໍລິການຕິດຕັ້ງ ແລະ ສ້ອມ ແປງດ້ານໄອຊີທີ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 22. ສິດ ແລະ ໜ້າທີ່ ຂອງ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານແຂວງ/ນະຄອນຫຼວງ**

ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາອອກ, ຕໍ່, ປ່ຽນແປງ, ໂຈະ ແລະ ຖອນໃບອະນຸຍາດຕາມທີ່ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກໍານົດໃຫ້;
2. ຕິດຕາມ ແລະ ກວດກາ ການປະຕິບັດເງື່ອນໄຂ, ມາດຕະຖານ ແລະ ລະບຽບການ ຕາມຂໍ້ຕົກລົງສະບັບນີ້;
3. ກ່າວເຕືອນ, ສຶກສາອົບຮົມ ຫຼື ປັບໃໝ ຕໍ່ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດຂໍ້ຕົກລົງສະບັບນີ້;
4. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 23. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ລວມທັງໃຊ້ແທນຄ່າເສຍຫາຍທີ່ຕົນ ໄດ້ກໍ່ຂຶ້ນ.

**ມາດຕາ 24. ມາດຕະການສຶກສາອົບຮົມ**

ພະນັກງານລັດຫຼື ຜູ້ໃຫ້ບໍລິການຈະຖືກສຶກສາອົບຮົມ ໃນກໍລະນີ ດັ່ງນີ້:

1. ພະນັກງານຂອງລັດທີ່ເຮັດວຽກຄຸ້ມຄອງບໍ່ໃຫ້ຄວາມສະດວກ, ຊັກຊ້າ, ກົດໜ່ວງຖ່ວງດຶງການພິຈາລະນາຄຳຮ້ອງຂໍອະນຸຍາດ, ໃຊ້ມາລະຍາດ ຫຼື ຄຳເວົ້າທີ່ບໍ່ເໝາະສົມ;

2. ຜູ້ໃຫ້ບໍລິການຕິດຕັ້ງ ແລະ ສ້ອມແປງດ້ານໄອຊີທີ ບໍລິການບໍ່ມີຄຸນນະພາບ ຫຼື ກົດໜ່ວງຖ່ວງດຶງການບໍລິການຢ່າງບໍ່ມີເຫດຜົນ ຫຼື ລະເມີດຂໍ້ຫ້າມໃນສະຖານເບົາ.

**ມາດຕາ 25. ມາດຕະຖານທາງວິໄນ**

ພະນັກງານ ແລະ ເຈົ້າໜ້າທີ່ ທີ່ລະເມີດຂໍ້ຕົກລົງສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນ ຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 26. ມາດຕະການປັບໃໝ**

ບຸກຄົນຫຼືນິຕິບຸກຄົນທີ່ລະເມີດຂໍ້ຕົກລົງສະບັບນີ້ຈະຖືກປັບໃໝດັ່ງນີ້:

1. ດຳເນີນທຸລະກິດໃຫ້ບໍລິການຕິດຕັ້ງ ແລະ ສ້ອມແປງ ດ້ານໄອຊີທີ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 10.000.000 ກີບ;

2. ນຳໃບອະນຸຍາດໃຫ້ຜູ້ອື່ນນຳໃຊ້, ເຊົ່າຫຼືໂອນ ຈະຖືກປັບໃໝ 5.000.000 ກີບ;

3. ບໍລິການເກີນປະເພດ ຫຼື ຂອບເຂດທີ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 2.000.000 ກີບ;

4. ປອມແປງ, ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ, ເຊື່ອງອຳຂໍ້ມູນ ຫຼື ບໍ່ໃຫ້ຄວາມຮ່ວມມືກັບອົງການຄຸ້ມຄອງ ແລະ ກວດກາການໃຫ້ບໍລິການຕິດຕັ້ງ ແລະ ສ້ອມແປງ ດ້ານໄອຊີທີ ຈະຖືກປັບໃໝ 2.000.000 ກີບ;

5. ໂຄສະນາໃສ່ຮ້າຍປ້າຍສີ ຫຼື ສ້າງຄວາມເສຍຫາຍໃຫ້ຜູ້ບໍລິການລາຍອື່ນ ຈະຖືກປັບໃໝ 2.000.000 ກີບ;

6. ເປີດເຜີຍຂໍ້ມູນສ່ວນຕົວຂອງຜູ້ໃຊ້ບໍລິການ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງ ຫຼື ເຈົ້າໜ້າທີ່ກ່ຽວຂ້ອງ ຈະຖືກປັບໃໝ 3.000.000 ກີບ;

7. ຜູກຂາດ ແລະ ກີດກັນຜູ້ໃຫ້ບໍລິການລາຍໃໝ່ ຈະຖືກປັບໃໝ 2.000.000 ກີບ;

8. ອຸດໜູນການບໍລິການ, ຄອບງຳ ຫຼື ໃຊ້ອຳນາດການຕະຫຼາດທີ່ບໍ່ເປັນທຳຕໍ່ຜູ້ປະກອບການລາຍອື່ນ ຈະຖືກປັບໃໝ 2.000.000 ກີບ;

9. ບໍ່ຕໍ່ອະນຸຍາດພາຍໃນ 30 ວັນຫຼັງຈາກໃບອະນຸຍາດໝົດອາຍຸແລ້ວ ຈະຖືກປັບໃໝ 500.000 ກີບ.

**ມາດຕາ 27. ມາດຕະການໂຈະແລະຖອນໃບອະນຸຍາດ**

ອົງການຄຸ້ມຄອງຈະດຳເນີນການໂຈະໃບອະນຸຍາດດຳເນີນທຸລະກິດໃຫ້ບໍລິການຕິດຕັ້ງ ແລະ ສ້ອມແປງ ດ້ານໄອຊີທີ ໃນກໍລະນີ ດັ່ງນີ້:

1. ບໍລິການເກີນປະເພດ ຫຼື ຂອບເຂດທີ່ລະບຸໄວ້ໃນໃບອະນຸຍາດ;

2. ປອມແປງ, ເຊື່ອງອຳຂໍ້ມູນ ຫຼື ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງຕາມການກຳນົດຂອງອົງການຄຸ້ມຄອງ ແລະ ກວດກາການໃຫ້ບໍລິການຕິດຕັ້ງ ແລະ ສ້ອມແປງ ດ້ານໄອຊີທີ;

3. ບໍ່ຕໍ່ໃບອະນຸຍາດພາຍໃນໄລຍະເວລາ 90 ວັນຫຼັງຈາກໃບອະນຸຍາດໝົດອາຍຸແລ້ວ;

4. ບໍ່ຊຳລະຄ່າທຳນຽມ, ຄ່າບໍລິການ ຫຼື ອາກອນໃຫ້ລັດຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 28. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ແລະ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານແຂວງ/ນະຄອນຫຼວງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 29. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງທີ່ໄດ້ລົງໃນຈົດໝາຍເຫດລັດຖະການ 15 ວັນ.

**ລັດຖະມົນຕີ**

ປອ. ທັນສະໄໝ ກົມມະສິດ

ສະບັບທີ 1: ລົງວັນທີ 23 ມິຖຸນາ 2016

# ເອກະສານຊ້ອນທ້າຍ

## I. ການປະກອບເອກະສານ

### 1. ການຂໍອະນຸຍາດໃໝ່

- ໃບຄຳຮ້ອງ;
- ໃບຢັ້ງຢືນທີ່ຢູ່;
- ບັດປະຈຳຕົວ/ໜັງສືຜ່ານແດນ ຂອງຜູ້ຂໍອະນຸຍາດ;
- ຊີວະປະຫວັດຜູ້ບໍລິຫານ;
- ໃບຢັ້ງຢືນການສຶກສາຂອງຜູ້ບໍລິຫານ ແລະ ພະນັກງານວິຊາການ;
- ບົດວິພາກເຕັກນິກ;
- ບົດວິພາກເສດຖະກິດ;
- ໃບທະບຽນວິສາຫະກິດ;
- ໃບຢັ້ງຢືນຖານະການເງິນ/ບັນຊີເງິນ ເຄື່ອນໄຫວທຸລະກິດ;
- ເອກະສານອື່ນໆຕາມຄວາມຈຳເປັນ ຕາມທີ່ເຫັນວ່າສົມຄວນ ຈາກຂະແໜງການຄຸ້ມຄອງ

### 2. ການຂໍຕໍ່ອະນຸຍາດ

- ໃບຄຳຮ້ອງ
- ໃບອະນຸຍາດສະບັບເກົ່າ (ຕົ້ນສະບັບ)
- ໃບມອບສິດ (ກໍລະນີຜູ້ຕ່າງໜ້າ)
- ໃບທະບຽນວິສາຫະກິດ (ຖ້າມີການປ່ຽນແປງ)
- ໃບຢັ້ງຢືນການເສຍອາກອນ
- ບົດສະຫຼຸບທາງດ້ານການເຄື່ອນໄຫວຜ່ານມາ
- ບົດສະຫຼຸບທາງດ້ານການເງິນ
- ເອກະສານອື່ນໆຕາມຄວາມຈຳເປັນ ຕາມທີ່ເຫັນວ່າສົມຄວນ ຈາກຂະແໜງການຄຸ້ມຄອງ
- ຖ້າມີການປ່ຽນແປງ ແມ່ນໃຫ້ຂັດຕິດ ເອກະສານທີ່ປ່ຽນແປງມາພ້ອມ

### 3. ການຂໍປ່ຽນແປງ, ໂຈະ ຫຼື ຍົກເລີກ ໃບອະນຸຍາດ

- ໃບຄຳຮ້ອງ
- ໃບສະເໜີ ເພື່ອຊີ້ແຈງເຫດຜົນໃນການຂໍປ່ຽນແປງ, ໂຈະ ຫຼື ຍົກເລີກ (ຈາກບໍລິສັດ)
- ສຳເນົາໃບອະນຸຍາດດຳເນີນທຸລະກິດ

**ຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ**

**ດຣ. ທະວີສັກ ມະໂນທັມ**